ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ
------====000====------

ກະຊວງການເງິນ
ກົມພາສີ

ເລກທີ: 06304 /ກພສ
ນະຄອນຫຼວງວຽງຈັນ, ວັນທີ: 08 SEP 2014

# ແຈ້ງການ

ເຖິງ : ຫົວໜ້າພະແນກອ້ອມຂ້າງກົມພາສີ, ຫົວໜ້າດ່ານພາສີຊາຍແດນ ໃນທົ່ວປະເທດ.

**ເລື່ອງ : ໃຫ້ເອົາໃຈໃສ່ໃນການຄຸ້ມຄອງ ການນໍາເຂົ້າ, ການຂົນສົ່ງຜ່ານແດນ ແລະ ການເຄື່ອນຍ້າຍນໍ້າມັນ ພາຍໃນ ສປປ ລາວ.**

- ອີງຕາມ ກົດໝາຍວ່າດ້ວຍພາສີ ສະບັບເລກທີ: 04/ສພຊ, ລົງວັນທີ: 20 ທັນວາ 2011.
- ອີງຕາມ ຄໍາສັ່ງເລກທີ: 2667/ກງ, ລົງວັນທີ: 22 ສິງຫາ 2014 ກ່ຽວກັບມາດຕາການ ກວດກາການຈັດເກັບລາຍຮັບໃນທ້າຍສົກປີງົບປະມານ 2013-2014 ຂອງຂະແໜງການພາສີ.

ກົມພາສີແຈ້ງການມາຍັງ ພະແນກອ້ອມຂ້າງກົມພາສີ, ດ່ານພາສີຊາຍແດນ ໃນທົ່ວປະເທດຊາບວ່າ: ເພື່ອຮັບປະກັນໃນການຄຸ້ມຄອງ, ຕິດຕາມກວດກາການນໍາເຂົ້າການຂົນສົ່ງຜ່ານແດນ ແລະ ການເຄື່ອນຍ້າຍນໍ້າມັນເຊື້ອໄຟພາຍໃນ ສປປ ລາວ ໃຫ້ຖືກຕ້ອງຕາມລະບຽບກົດໝາຍພາສີ ແລະ ລະບຽບກົດໝາຍອື່ນໆທີ່ກ່ຽວຂ້ອງ.

*ກົມພາສີຈິ່ງໄດ້ອອກແຈ້ງການ ດັ່ງນີ້:*

I. ການປະກອບໃບແຈ້ງພາສີເປັນລາຍລະອຽດ ໃຫ້ປະຕິບັດຄືດັ່ງນີ້:

1. ການນໍາເຂົ້ານໍ້າມັນເສຍພາສີທົ່ວໄປ.

1.1 ການອະນຸຍາດໃຫ້ຄໍ້າປະກັນເອົານໍ້າມັນອອກຈາກດ່ານພາສີຊາຍແດນແມ່ນການອໍານວຍຄວາມສະດວກໃຫ້ບໍລິສັດເອົານໍ້າມັນລົງໄວ້ສາງເປັນການຊົ່ວຄາວ ເພື່ອລໍຖ້າການປະກອບໃບແຈ້ງພາສີເປັນລາຍລະອຽດພາຍໃນກໍານົດ 07ວັນ ຫາ 15 ວັນ ຕາມມາດຕາ 24 ຂອງກົດໝາຍພາສີ ສະບັບເລກທີ: 04/ສພຊ, ລົງວັນທີ: 20 ທັນວາ 2011 ແລະບໍ່ອະນຸຍາດໃຫ້ບໍລິສັດຂາຍຍົກ ແລະຂາຍຍອຍໄດ້ຈົນກ່ວານໍ້າມັນໄດ້ເສຍພາສີ-ພັນທະອື່ນຖືກຕ້ອງຄົບຖ້ວນ ຈິ່ງສາມາດຊື້-ຂາຍໄດ້. ໃນນັ້ນການຊື້-ຂາຍຕ້ອງມີສັນຍາກັບລູກຄ້າພ້ອມທັງອອກໃບບິງສັ່ງຈ່າຍ ແລະໃບບິນອາກອນອອກໃຫ້ເພື່ອສະດວກໃນການຕິດຕາມກວດກາຂອງເຈົ້າໜ້າທີ່ກ່ຽວຂ້ອງ.

1.2 ຫາກບໍລິສັດທີ່ມີຈຸດປະສົງຕ້ອງການແຈ້ງພາສີກ່ອນ ນໍ້າມັນມາຮອດດ່ານພາສີຊາຍແດນ ແມ່ນສາມາດດໍາເນີນການໄດ້ຕາມ ມາດຕາ 29 ຂອງກົດໝາຍພາສີ ສະບັບເລກທີ: 04/ສພຊ, ລົງວັນທີ: 20 ທັນວາ 2011 ແຕ່ຕ້ອງໄດ້ນໍາເອົານໍ້າມັນດັ່ງກ່າວ ລົງໄວ້ສາງກ່ອນ ໂດຍບໍ່ອະນຸຍາດໃຫ້ລົດຂົນສົ່ງນໍ້າມັນຂອງຕ່າງປະເທດ ນໍາເອົານໍ້າມັນໄປລົງປໍ້າຂາຍຍົກ-ຂາຍຍ່ອຍ ແລະ ຕ້ອງໄດ້ປະຕິບັດຕາມລະບຽບຂອງຂະແໜງການກ່ຽວຂ້ອງຢ່າງເຂັ້ມງວດ. ໃນກໍລະນີມີການລະເມີດລະບຽບການຂ້າງເທິງນີ້ ມອບໃຫ້ເຈົ້າໜ້າທີ່ພາສີ

ດຳເນີນການຕາມລະບຽບກົດໝາຍ ແລະ ໃຫ້ປະສານສົມທົບກັບຂະແໜງສ່ວຍສາອາກອນ, ຂະແໜງອຸດສາຫະກຳ ແລະ ການຄ້າ ເພື່ອປຶກສາຫາລື ໃນການດຳເນີນມາດຕະການຕ່າງໆ ຕາມລະບຽບກົດໝາຍຂອງຂະແໜງການກ່ຽວຂ້ອງ.

II. <u>ການນຳເຂົ້ານ້ຳມັນຢົກເວັ້ນພາສີ-ອາກອນ</u>:

- ການນຳເຂົ້ານ້ຳມັນຍົກເວັ້ນພາສີ-ອາກອນຂອງບັນດາໂຄງການລົງທຶນຕ່າງໆ ແມ່ນໃຫ້ເອົາໃຈໃສ່ໃນການຄຸ້ມຄອງການນຳເຂົ້າ ຕາມແຈ້ງການຂອງຫ້ອງການກະຊວງການເງິນ ສະບັບເລກທີ: 1556/ຫກ.ກງ, ລົງວັນທີ: 08 ກໍລະກົດ 2009 ກ່ຽວກັບການຈັດຕັ້ງປະຕິບັດ ແລະການຄຸ້ມຄອງການນຳນ້ຳມັນຍົກເວັ້ນທີ່ນຳເຂົ້າມາຮັບໃຊ້ໂຄງການຕ່າງໆໃນທົ່ວປະເທດ ແລະ ແຈ້ງການຂອງກົມພາສີ ສະບັບເລກທີ: 1483/ກພສ, ລົງວັນທີ: 19 ເມສາ 2011 ກ່ຽວກັບການຄຸ້ມຄອງການນຳເຂົ້ານ້ຳມັນຍົກເວັ້ນຂອງບັນດາໂຄງການລົງທຶນ
- ສຳລັບການເຄື່ອນຍ້າຍນ້ຳມັນທຸກປະເພດຈາກແຂວງໜຶ່ງ ໄປຫາແຂວງໜຶ່ງ ຕ້ອງໄດ້ປະກອບເອກະສານໃຫ້ຄົບຖ້ວນ ເຊັ່ນ: ໃບແຈ້ງພາສີເປັນລາຍລະອຽດນຳເຂົ້າເບື້ອງຕົ້ນ, ສັນຍາຊື້ຂາຍລະຫວ່າງບໍລິສັດແມ່ ແລະ ສາຂາ, ໃບບິນອາກອນ ແລະ ອື່ນໆ. ການອອກເອກະສານເຄື່ອນຍ້າຍນ້ຳມັນໃຫ້ພົວພັນ ຢູ່ໜ່ວຍງານຕ້ານ ແລະ ສະກັດກັ້ນສິນຄ້າລັກລອບໜີພາສີປະຈຳແຕ່ລະແຂວງ (ແຂວງຕົ້ນທາງ) ເພື່ອອອກເອກະສານກຳກັບການເຄື່ອນຍ້າຍ, ເວລາໄປຮອດແຂວງປາຍທາງຕ້ອງໄດ້ເອົາເອກະສານການເຄື່ອນຍ້າຍນ້ຳມັນໄປແຈ້ງຕໍ່ໜ່ວຍງານຕ້ານ ແລະ ສະ ກັດກັ້ນສິນຄ້າລັກລອບໜີພາສີປາຍທາງ ເພື່ອຢັ້ງຢືນ ແລະ ຕິດຕາມນ້ຳມັນນຳເອົາໄປລົງສາງໃຫ້ສອດ ຄ່ອງກັບລະບຽບການຂະແໜງການກ່ຽວຂ້ອງ.

III. <u>ການນຳເຂົ້ານ້ຳມັນ ເພື່ອນຳເຂົ້າສົ່ງອອກຕໍ່</u>:

3.1. ການນຳເຂົ້ານ້ຳມັນ ເພື່ອສົ່ງອອກຕໍ່ ພາຍຫລັງທີ່ໄດ້ເຊັນສັນຍາກັບກົມພາສີແລ້ວ ເວລາມີການນຳເຂົ້ານ້ຳມັນຢູ່ດ່ານພາສີຊາຍແດນ ຕ້ອງໃຫ້ປະກອບໃບແຈ້ງພາສີ ເປັນລາຍລະອຽດ ແລະ ມອບຄ່າທຳນຽມຕາມລະບຽບການກົດໝາຍຄົບຖ້ວນ ຈຶ່ງປະກອບເອກະສານກຳກັບການເຄື່ອນຍ້າຍຕາມລະບຽບການ ພ້ອມທັງໜີບກົວ ຫລັງຈາກນັ້ນ ຈຶ່ງປະສານກັບດ່ານປາຍທາງ ເພື່ອຕິດຕາມຄຸ້ມຄອງຕາມລະບຽບກົດໝາຍ.

IV. <u>ການການນຳເຂົ້ານ້ຳມັນຜ່ານແດນສາກົນ</u>:

4.1. ການນຳເຂົ້ານ້ຳມັນ ຜ່ານແດນສາກົນ ແມ່ນໃຫ້ປະຕິບັດຕາມໜັງສືລັດຖະການ ສະບັບເລກທີ 1242/ກພສ, ລົງວັນທີ 06 ເມສາ 2010.

V. <u>ວິທີການກວດການ້ຳມັນນຳເຂົ້າ</u>: ແມ່ນໃຫ້ຈັດຕັ້ງປະຕິດບັດຕາມ ແຈ້ງການແນະນຳຂອງກົມພາສີ ສະບັບເລກທີ: 07144/ກພສ, ລົງວັນທີ: 11 ມັງກອນ 2013 ລະບຽບການຂົນສົ່ງຜ່ານແດນ.

ແຈ້ງການສະບັບນີ້ ແມ່ນໃຫ້ຈັດຕັ້ງປະຕິບັດນັບແຕ່ມືລົງລາຍເຊັນເປັນຕົ້ນໄປ.

ຫົວໜ້າກົມພາສີ

…ສະພັງທອງ ສີພັນ…

…nsaphangthone SIPHAN…